ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ
ກອງຈະລາຈອນທາງອາກາດລາວ

ເລກທີ 3039 /ກຈລ
ນະຄອນຫລວງວຽງຈັນ, ວັນທີ 24 ກັນຍາ 2026

## ໜັງສືແຈ້ງເຊີນປະມູນ

1. ກອງຈະລາຈອນທາງອາກາດລາວ ກະຊວງໂຍທາທິການ ແລະ ຂົນສົ່ງ. ໄດ້ຮັບງົບປະມານປະຈຳປີ 2026. ສຳລັບການປະມູນ-ຈັດຊື້ເຄື່ອງແບບພະນັກງານ ປະຈຳປີ 2026. ຈຶ່ງຂໍເຊີນບັນດາບໍລິສັດທີ່ມີຄຸນນະວຸດທິເໝາະສົມສົນໃຈເຂົ້າຍື່ນຊອງປະມູນ, ກຳນົດເວລາໃນການມອບ-ຮັບ ແມ່ນພາຍໃນ 60 ວັນ;
2. ການປະມູນຈະດຳເນີນຕາມຂັ້ນຕອນ ການປະມູນເປີດກ້ວາງພາຍໃນ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນໃນຄັ້ງນີ້ແມ່ນອະນຸຍາດໃຫ້ທຸກໆ ບໍລິສັດທີມີຄຸນນະວຸດທິເໝາະສົມ ສົນໃຈເຂົ້າຮ່ວມແຂ່ງຂັນປະມູນ ສາມາດຕິດຕໍ່ພົວພັນເອົາເອກະສານປະມູນໄດ້ທີ່ ກອງຈະລາຈອນທາງອາກາດລາວ ກະຊວງໂຍທາທິການ ແລະ ຂົນສົ່ງ, ເບີໂທລະສັບຕິດຕໍ່ 021 520776, 020 55342660, 020 54111242 ໃນເວລາລັດຖະການ;
4. ເອກະສານປະມູນເລີ່ມຂາຍນັບແຕ່ວັນທີແຈ້ງເຊີນເປັນຕົ້ນໄປໃນລາຄາ 2,000,000 ກີບ/ຊອງ. ວິທີການຊຳລະເປັນເງິນສົດ ຈຳນວນເງິນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ ແລະ ຈະໄດ້ນຳໃຊ້ເຂົ້າໃນວຽກງານການປະມູນ;
5. ຊອງປະມູນຕ້ອງສົ່ງກ່ອນເວລາ 09:00 ໂມງ ຂອງວັນທີ່ 01 ພະຈິກ 2026. ຊອງປະມູນທຸກໆຊອງຈະໄດ້ເປີດ ເວລາ 09:00 ໂມງ ຂອງວັນທີ່ 01 ພະຈິກ 2026 ຢູ່ຫ້ອງປະຊຸມ ກອງຈະລາຈອນທາງອາກາດລາວ ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຜູ້ປະມູນເຂົ້າຮ່ວມແຂ່ງຂັນ ທີ່ຫ້ອງປະຊຸມຂອງກອງຈະລາຈອນທາງອາກາດລາວ. ຫາກຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຖືກຮັບເອົາ ແລະ ສົ່ງຄືນໂດຍບໍ່ມີການເປີດຊອງ;
6. ຊອງປະມູນຕ້ອງຄ້ຳປະກັນດ້ວຍແຊັກ (ວິຊ່າ) ຫຼື ໜັງສືຄ້ຳປະກັນອອກໂດຍທະນາຄານ ຊຶ່ງມີມູນຄ່າຂອງການຄ້ຳປະກັນບໍ່ໃຫ້ຫຼຸດ 2% ຂອງມູນຄ່າທີສະເໜີປະມູນ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງທ່ານເຂົ້າຮ່ວມປະມູນດັ່ງກ່າວຕາມທາງຄວນດ້ວຍ.

**ເຊັນແທນ ຫົວໜ້າກອງ**
**ຮອງຫົວໜ້າກອງ**

ທອງສະຫວັນ ຈິນດາວົງ